# ໜັງສືຕີໂມເຕທີ ໑

ໃຈຄວາມສຳຄັນ ຕັ້ງຢູ່ໃນຄວາມສັດຊື່ໃນອົງພຣະຄຣິດ ຫລື ຄຳໂອວາດອັນດີ

ຈຳນວນບົດ ໖ ບົດ

## ວ່າດ້ວຍຜູ້ຮັບ

ຜູ້ຮັບໜັງສືນີ້ຄືທ່ານຕີໂມເຕ ແມ່ຂອງເພິ່ນເປັນຊາດຢູດາ ສ່ວນພໍ່ເປັນຊາວເຣເລັນ (ກິຈການ ໑໖:໑) ພໍ່ຂອງເພິ່ນໄດ້ຕາຍແຕ່ເພິ່ນຍັງນ້ອຍ ແມ່ແລະແມ່ເຖົ້າຂອງເພິ່ນໄດ້ເຊື່ອໃນພຣະເຈົ້າ (ຕີໂມເຕທີ ໒ ໑:໕) ສະນັ້ນທ່ານຕີໂມເຕຈຶ່ງໄດ້ຮຽນຮູ້ພຣະຄັມພີຈາກແມ່ຂອງທ່ານຕັ້ງແຕ່ຍັງໜຸ່ມນ້ອຍ (໒ ຕີໂມເຕ ໓:໑໔–໑໕)

ຄຳວ່າ ຕີໂມເຕ ແປວ່າ "ຜູ້ນັບຖືພຣະເຈົ້າ" ທ່ານໂປໂລໄດ້ຖືທ່ານຕີໂມເຕເປັນລູກຮັກໃນຄວາມເຊື່ອ (໑ ຕີໂມເຕ ໑:໑, ໒; ໑໘:໑ ໂກລິນໂທ ໔:໑໗) ເພາະທ່ານຕີໂມເຕໄດ້ເຊື່ອພຣະເຢຊູຕັ້ງແຕ່ເວລາທ່ານໂປໂລໄປປ່າວປະກາດຄັ້ງທີ ໑ ໃນເມືອງລີຊະທາ (ກິຈການ ໑໔:໖–໗) ແລ້ວໃນເວລາໄປປ່າວປະກາດ ຄັ້ງທີສອງທ່ານຕີໂມເຕ ກໍເປັນລູກສິດຜູ້ມີຊື່ສຽງໃນທ່າມກາງພວກພີ່ນ້ອງ ໂດຍໄດ້ຕິດຕາມນຳທ່ານໂປໂລເພື່ອປ່າວປະກາດແລະເປັນເພື່ອນກັນບົວຣະບັດພຣະເຈົ້າ (ກິຈການ ໑໖:໑–໓)

ກ່ອນເວລາທີ່ທ່ານຕີໂມເຕຈະເຂົ້າຮັບໃຊ້ພຣະເຈົ້າ (ກິຈການ ໑໖:໑–໔) ເພິ່ນໄດ້ຮັບຊື່ສຽງດີໃນທ່າມກາງພວກຄຣິສຕະຈັກ ເພິ່ນໄດ້

ຮັບພິທີຕັດໜັງທີ່ລັບ (ສົມຕັດ) ເພາະວ່າພໍ່ຂອງເພິ່ນເປັນຊາວເຮເລັນ ພວກເຖົ້າແກ່ກໍເຄີຍໄດ້ວາງມືໃສ່ເພິ່ນ (໑ ຕີໂມເຕ ໔:໑໔) ແລະທ່ານໂປໂລກໍເຄີຍວາງມືໃສ່ເພິ່ນດ້ວຍ ໒ ຕີໂມເຕ ໑:໖

## ທ່ານໂປໂລກັບທ່ານຕີໂມເຕໄດ້ສັມພັນກັນດັ່ງນີ້

໑. ທ່ານຕີໂມເຕເປັນຜູ້ສນິດສນົມກັບທ່ານໂປໂລແລະເປັນຄົນສັດຊື່ທີ່ສຸດ (ຟີລິບ ໒:໑໙–໒໒; ໒ ຕີໂມເຕ ໓:໑໐)

໒. ທ່ານໂປໂລມີຄວາມໄວ້ວາງໃຈໃນທ່ານຕີໂມເຕທີ່ສຸດ ຈຶ່ງໄດ້ມອບໜ້າທີ່ແລະການສຳຄັນໃຫ້ເພິ່ນເຮັດ (໑ ເທຊາໂລນິກ ໓:໑–໒; ໑ ໂກລິນໂທ ໔:໑໗; ໑໖-໑໐; ໑ ຕີໂມເຕ ໑:໓)

໓. ໂດຍທົ່ວ ໆ ໄປແລ້ວທ່ານຕີໂມເຕເປັນຄົນໃຈອ່ອນແລະບໍ່ກ້າ ປານໃດ (໒ ຕີໂມເຕ ໑:໗)

໔. ໃນເວລາທ່ານໂປໂລຖືກຄຸກ ທ່ານຕີໂມເຕກໍເອົາໃຈໃສ່ແລະເບິ່ງແຍງເພິ່ນສເນີ (ຟີລິບ ໑:໑)

໕. ເມື່ອທ່ານໂປໂລຖືກຄຸກໃນຄັ້ງທີສອງແລະໃກ້ຈະຕາຍແລ້ວ ເພິ່ນກໍຄິດເຖິງແລະຢາກເຫັນທ່ານຕີໂມເຕອີກ (໒ ຕີໂມເຕ ໔:໙–໑໓)

## ວ່າດ້ວຍຄວາມມຸ່ງໝາຍ

໑. ທ່ານໂປໂລຮູ້ວ່າ ມີຄຣູສອນປອມກຳລັງສອນພວກຄຣິສຕະຈັກຢູ່ສະເໝີ ຈຶ່ງຢາກ ສອນ ທ່ານ ຕີໂມເຕ ໃຫ້ ຮູ້ຈັກ ຄວາມ ປະພຶດ ພາຍໃນຄຣິສຕະຈັກ ບົດ ໓:໑໕

໒. ເພື່ອບອກທ່ານຕີໂມເຕໃຫ້ຣະວັງຄຳສອນປອມ

໓. ເພື່ອຕັກເຕືນທ່ານຕີໂມເຕ ໃຫ້ຕັ້ງໝັ້ນລົງຢູ່ໃນຄວາມຈິງທີ່ໄດ້ຮັບ
ຈາກເພິ່ນແລະທີ່ໄດ້ຮັບຈາກພຣະຄັມພີ ບົດ ໔:໑໑—໑໖

## ວ່າດ້ວຍເນື້ອຄວາມ

໑. ເປັນຄຳສັດຈິງແລະຄວນຮັບເອົາໄວ້ ບົດ ໑:໑໕

໒. ສອນໃຫ້ມີຄວາມຮັກອັນບໍຣິສຸດ ໃຫ້ມີຄວາມຮູ້ສຶກສຳນຶກທີ່ດີ ແລະ
ໃຫ້ມີຄວາມເຊື່ອອັນແທ້ຈິງ ບົດ ໑:໕

໓. ຕັກເຕືນໃຫ້ທ່ານຕີໂມເຕປະພຶດຕາມເກົາສັ່ງສອນອັນດີນັ້ນ ບົດ ໔:໑໖

## ວ່າດ້ວຍຄຳສອນປອມ

໑. ເປັນເຫດໃຫ້ຜິດຖຽງກັນ ບົດ ໑:໔; ໖:໔–໕

໒. ເປັນເຫດໃຫ້ຢູ່ໃຕ້ອຳນາດຂອງມານຍັດ ບົດ ໑:໗

໓. ສອນບໍ່ໃຫ້ເອົາຜົວເອົາເມັຍແລະໃຫ້ບັງຄັບຕົນເອງ
ເມື່ອເອົາບຸນ ບົດ ໔:໑–໔:໙

໔. ເປັນເຫດໃຫ້ຮັກເງິນຮັກຄຳ ບົດ ໖:໗–໑໐

໕. ເປັນເຫດໃຫ້ເພິ່ງວິຊາຄວາມຮູ້ປອມ ບົດ ໖:໒໐–໒໑

໖. ເປັນເຫດທີ່ເກີດຈາກສິ່ງທີ່ຊອບໃຈຕົນເອງ ໒ ຕີໂມເຕ ໔:໓

## ວ່າດ້ວຍຄຳທີ່ໃຊ້ເອີ້ນພຣະເຢຊູ

໑. ພຣະເຢຊູຄຣິດຈິ່ງເປັນຄວາມຫວັງຂອງເຮົາ ບົດ ໑:໑

໒. ພຣະເຢຊູຄຣິດຈິ່ງເປັນພຣະຜູ້ເປັນເຈົ້າຂອງເຮົາ ບົດ ໑:໑

໓. ພຣະເຢຊູຄຣິດອົງດຽວທີ່ຊົງເປັນຄົນກາງ ບົດ ໒:໕

໔. ພຣະເຢຊູຄຣິດຊົງເປັນມະນຸດ ບົດ ໒:໖

໕. ຊົງເປັນພຣະຜູ້ຊ່ອຍຂອງຄົນທັງປວງ ບົດ ໔:໑໐

໖. ຊົງເປັນພຣະມະຫາກະສັດຂອງກະສັດທັງປວງ ໖:໑໕

໗. ຊົງເປັນນາຍຂອງເຈົ້ານາຍທັງປວງ ບົດ ໖:໑໕

## ການແບ່ງເປັນພາກ

### ພາກທີ ໑ ວ່າດ້ວຍຄຣິສຕະຈັກຂອງພຣະເຈົ້າ ບົດ ໑:໓-໓:໑໓

໑. ວ່າດ້ວຍຄຳສອນໃນຄຣິສຕະຈັກ ບົດ ໑:໓–໒໐

ກ. ລັກສະນະແລະເນື້ອຄວາມຂອງຄວາມຈິງ ບົດ ໑:໓–໑໑

ຂ. ໜ້າທີ່ຂອງທ່ານໂປໂລກັບທ່ານຕີໂມເຕ ບົດ ໑:໑໒–໒໐

໒. ວ່າດ້ວຍຄວາມປະພຶດເມື່ອເວລາ ຊຸມນຸມກັນ ບົດ ໒:໑-໑໕

ກ. ກ່ຽວກັບການອ້ອນວອນ ບົດ ໒:໑–໘

ຂ. ກ່ຽວກັບພວກຜູ້ຍິງ ບົດ ໒:໙–໑໕

໓. ວ່າດ້ວຍຄົນໃນຄຣິສຕະຈັກ ບົດ ໓:໑–໑໓

ກ. ພວກເຖົ້າແກ່ຈະຕ້ອງເປັນຄົນແນວໃດ ບົດ ໓:໑–໗

ຂ. ພວກຮັບໃຊ້ຕ້ອງເປັນຄົນແນວໃດ ບົດ ໓:໘–໑໓

# ພາກທີ ໖ ວ່າດ້ວຍການຮັບໃຊ້ຂອງທ່ານ ຕີໂມເຕ ບົດ ໓:໑໔-໖:໒໑

໑. ວ່າດ້ວຍຄວາມປະພຶດສ່ວນຕົວພາຍ ໃນຄຣິສຕະຈັກ — ບົດ ໓:໑໔–໔:໑໖

- ກ. ກ່ຽວກັບຄວາມຈິງ — ບົດ ໓:໑໔–໑໖
- ຂ. ກ່ຽວກັບຄວາມບໍ່ຈິງ — ບົດ ໔:໑–໑໑
- ຄ. ກ່ຽວກັບມາຣະຍາດຂອງຄົນຄຣິສຕຽນ — ບດ ໔:໑໒–໑໖

໒. ວ່າດ້ວຍການຮັບໃຊ້ແລະການປົກຄອງ ຂອງທ່ານຕີໂມເຕ — ບົດ ໕:໑–໖:໑໙

- ກ. ກ່ຽວກັບພວກແມ່ໝ້າຍ ພວກເຖົ້າແກ່ ແລະພວກຄົນໃຊ້ — ບົດ ໕:໑–໖:໒
- ຂ. ກ່ຽວກັບພວກຄົນຊື່ອ — ບົດ ໖:໓–໑໖
- ຄ. ກ່ຽວກັບຄົນຮັ່ງມີ — ບົດ ໖:໑໗–໑໙